ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໜັງສືແຈ້ງເຊີນປະມູນ

ແຂວງຫົວພັນ
ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ:04.00../ກສຂ.
ຫົວພັນ, ວັນທີ:23 ມິຖຸນາ 2026

ສັນຍາເງິນກູ້ຢືມເລກທີ: ADB Loan 3817-LAO, ສັນຍາເງິນຊ່ວຍເຫຼືອລ້າເລກທີ: ADB Grant 0659-LAO (SF), ສັນຍາເງິນຊ່ວຍເຫຼືອລ້າເລກທີ: EU Grant 0660-LAO (EF) ແລະ ສັນຍາເງິນຊ່ວຍເຫຼືອລ້າເລກທີ: GAFSP Grant 0912-LAO (EF.

**ຊື່ພູດການປະມູນ/ສັນຍາ: ກໍ່ສ້າງ - ສ້ອມແປງຊົນລະປະທານນ້ຳຣາມ ເມືອງຊຳເໜືອ ແຂວງຫົວພັນ.**
**ເລກທີອ້າງອີງ: OP3-CW14**

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ທຶນຈາກທະນາຄານພັດທະນາອາຊີເພື່ອໃຊ້ຈ່າຍສໍາລັບໂຄງການ ພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (SRIWSM) ແລະ ມີຈຸດປະສົງນໍາໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍຂອງສັນຍາກໍ່ສ້າງ - ສ້ອມແປງຊົນລະປະທານນ້ຳຣາມ ເມືອງຊໍາເໜືອ ແຂວງຫົວພັນ (ສັນຍາເລກທີ: OP3-CW14).
2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຫົວພັນ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະ ສົມເຂົ້າຍື່ນຊອງປະມູນສໍາລັບ ຟື້ນຟູສ້ອມແປງລະບົບຄອງເໝືອງຊົນລະປະທານຊົນລະປະທານນ້ຳຣາມ ເມືອງຊໍາເໜືອ ແຂວງຫົວພັນ (ສັນຍາເລກທີ: OP3-CW14), ໄລຍະກໍ່ສ້າງ 18 ເດືອນ.
3. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ໂດຍປະກາດ ຜ່ານສື່ພາຍໃນປະເທດ ຕາມທີ່ໄດ້ລະບຸໄວ້ໃນນະໂຍບາຍ ແລະ ລະບຽບການຈັດຊື້-ຈັດຈ້າງ ຂອງທະນາຄານພັດທະນາອາຊີ (ປີ 2017, ແລະ ສະບັບທີ່ປັບປຸງເປັນໄລຍະ) ແລະ ເປີດໃຫ້ທຸກໆຜູ້ປະມູນທີ່ມີຄວາມເໝາະສົມ ຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນ ເອກະສານປະມູນ.
4. ຜູ້ປະມູນສາມາດເບິ່ງເງື່ອນໄຂຄວາມເໝາະສົມ ແລະ ດ້ານຄຸນນະວຸທິ ໃນ ເອກະສານປະມູນ.
   - ລາຍຮັບສະເລ່ຍຈາກການກໍ່ສ້າງ: ຢ່າງໜ້ອຍ 950,000 ໂດລາສະຫະລັດ ຕາມທີ່ກໍານົດໃນເອກະສານປະມູນ, ຄິດໄລ່ເປັນການຈ່າຍເງິນທີ່ໄດ້ຮັບການຮັບຮອງທັງໝົດທີ່ໄດ້ຮັບສໍາລັບສັນຍາທີ່ສໍາເລັດ ຫຼື ກໍາລັງດໍາເນີນຢູ່ ໃນໄລຍະ 3 ປີລ່າສຸດ (2023 - 2025). ຖ້າເປັນຜູ້ປະມູນທຸລະກິດຮ່ວມ ທຸກໆພາກສ່ວນຮ່ວມກັນ ຕ້ອງຜ່ານເງື່ອນໄຂ 100%.

สแกนด้วย CamScanner

- ປະສົບການ: ຢ່າງໜ້ອຍ 1 ໂຄງການກໍ່ສ້າງຂອງສັນຍາທີ່ຄ້າຍຄືກັນ ທີ່ເຊັນສັນຍາ ແລະ ສຳເລັດໄປແລ້ວເປັນສ່ວນໃຫຍ່ໃນນາມເປັນຜູ້ຮັບເໝົາຫຼັກ, ສະມາຊິກຂອງບໍລິສັດຮ່ວມທຸລະກິດ ຫຼື ຜູ້ຮັບເໝົາຊ່ວງຕໍ່ ນັບຕັ້ງແຕ່ວັນທີ່ 1 ມັງກອນ 2021 ແລະ ກຳນົດວັນຍື່ນຊອງປະມູນ, ມີມູນຄ່າສັນຍາຢ່າງໜ້ອຍ 750,000 ໂດລາສະຫະລັດ.
- ເງື່ອນໄຂອື່ນໆແມ່ນກຳນົດໃນ ເອກະສານປະມູນ.

5. ຜູ້ປະມູນທີ່ມີຄວາມເໝາະສົມສາມາດພົວພັນເອົາຂໍ້ມູນ ແລະ ກວດກາເບິ່ງເອກະສານປະມູນ ຢູ່ທີ່ຢູ່ຂ້າງລຸ່ມ ໃນໂມງລັດຖະການ. ໃນກໍລະນີທີ່ພົບຄວາມຫຍຸ້ງຍາກໃນການພົວພັນເອົາຂໍ້ມູນ ແລະ ກວດກາເບິ່ງເອກະສານປະມູນ, ຜູ້ປະມູນ ສາມາດສອບຖາມຜ່ານທາງ ອີເມລ: chitsoukjalern@gmail.com.

   ຜູ້ປະມູນທີ່ມີຄວາມເໝາະສົມ ແລະ ສົນໃຈ ສາມາດຍື່ນໜັງສືສະເໜີຂໍຊື້ເອກະສານປະມູນຄົບຊຸດເປັນພາສາລາວ, ໃນມູນຄ່າ 100 ໂດລາສະຫະລັດ ດ້ວຍການຈ່າຍເປັນເງິນສົດ ຫຼື ໂອນເຂົ້າບັນຊີໂຄງການ ພຊດ: ເລກທີບັນຊີ 170110101779784002. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນສາຂາແຂວງຫົວພັນ.

6. ຊອງປະມູນຈະຕ້ອງສົ່ງ ໃນວັນທີ ຫຼື ກ່ອນມື້ເປີດຊອງ ວັນທີ 31 ກໍລະກົດ 2026 ເວລາ 09 ໂມງ 00 ນາທີ ທີ່ຫ້ອງປະຊຸມຂອງ ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຫົວພັນ. ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ການປະມູນຈະເປີດຕໍ່ສາທາລະນະ ໂດຍຊ້ອງໜ້າ ຄະນະກຳມະການ ຈັດຊື້-ຈັດຈ້າງ, ຕົວແທນຂອງຜູ້ ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນທີ່ມີຄວາມສົນໃຈ ຢູ່ສະຖານທີ່ໆກຳນົດໄວ້ຂ້າງລຸ່ມນີ້.

7. ເອກະສານຈະຕ້ອງປະກອບໜັງສື " ການຄ້ຳປະກັນການປະມູນດ້ວຍກຽດ ".

8. ທີ່ຢູ່ທີ່ເວົ້າເຖິງຢູ່ຂ້າງເທິງນີ້ແມ່ນ:

   ຫ້ອງປະຊຸມຂອງ ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຫົວພັນ. ບ້ານຊຳເໜືອ, ເມືອງຊຳເໜືອ, ແຂວງຫົວພັນ, ສປປ ລາວ.
   ເບີໂທລະສັບ +856 5895 5456; +856 20 5942 2945
   ອີເມລ: chitsoukjalern@gmail.com

ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງຫົວພັນ

ເກົ້ວປະສິດ ນິກມະນີວົງ

สแกนด้วย CamScanner